# ກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນ ປະຈຳປີ 2023 ແລະວາງແຜນທິດທາງແຜນການປະຈຳປີ 2024

# 13 ພຶດສະພາ 2024, ໂຮງແຮມ ຄຣາວພາຊາ

ນຳສະເໜີໂດຍ: ທ່ານ ສີສົມພອນ ເພັດດາວເຮືອງ ຮອງຫົວໜ້າກົມຮ່ວມມືສາກົນ

ກະຊວງແຜນການ ແລະການລົງທຶນ

# ຫົວຂໍ້:



ຜົນກອງປະຊຸມໂຕະມົນ ປະຈຳປີ 2023 ແລະ ແຈ້ງການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2023



ບູລິມະສິດ ແລະ ແຜນວຽກຈຸດສຸມເພື່ອກະກຽມກອງປະຊຸມໂຕະມົນ ແລະ ຮ່າງແນວຄວາມຄິດກອງປະຊຸມໂຕະມົນ 2024

# I. ຜົນຂອງກອງປະຊຸມໂຕະມົນປະຈໍາປີ 2023 ແລະແຈ້ງການຜັນຂະຫຍາຍຜົນກອງປະຊຸມໂຕມົນ 2023:

- ກອງປະຊຸມໂຕະມົນປະຈໍາປີ 2023 ໄດ້ຈັດຂຶ້ນໃນວັນທີ 13 ກຸມພາ 2024 ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ລມຕ ກຜທ ແລະ ຜູ້ຕາງໜ້າອົງການ ສປຊ ປະຈໍາ ສປປ ລາວ;
- ອີງຕາມບົດລາຍງານຂອງກະຊວງແຜນການ ແລະການລົງທຶນ ສະບັບເລກທີ 571/ກຜທ, ລົງວັນທີ 6 ມີນາ 2024;
- ອີງຕາມ ທິດຊີ້ນໍາ ຂອງພະນະທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ໃນຄັ້ງວັນທີ 29 ເມສາ 2024;
- ອີງຕາມແຈ້ງການຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ສະບັບເລກທີ: 868/ຫສນຍ, ລົງວັນທີ 06 ພຶດສະພາ 2024 ວ່າດ້ວຍທິດຊີ້ນໍາຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນ ປະຈໍາປີ 2023

# ແຈ້ງການຜົນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2023: (1)

| Government Agencies | Key action areas |
|---|---|
| 1. ກະຊວງແຜນການ ແລະການລົງທຶນ | • ສືບຕໍ່ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍຜົນການປະເມີນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ແຜນການສືບຕໍ່ການຈັດຕັ້ງປະຕິບັດທ້າຍສະໄໝ ຮອດປີ 2025 ໂດຍສຸມໃສ່ 6 ເປົ້າໝາຍ 42 ວຽກຈຸດສຸມ ຂອງຜົນການປະເມີນກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ທີ່ສະພາແຫ່ງຊາດໄດ້ຮັບຮອງ;<br>• ສືບຕໍ່ພັດທະນາດ້ານໂຄງສ້າງເສດຖະກິດ ໃຫ້ເຂັ້ມແຂງມີສະຖຽນລະພາບ ແລະ ຈັດລຽງບູລິມະສິດ ໃຫ້ແທດເໝາະກັບສະພາບການພັດທະນາໃນປັດຈຸບັນ;<br>• ຈັດລຽງບູລິມະສິດ ໃນການລົງທຶນທາງດ້ານຊັບພະຍາກອນມະນຸດ ເພື່ອປູພື້ນຖານໃຫ້ແກ່ການຂ້າມຜ່ານ ອອກຈາກສະຖານະ ພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ ໂດຍການຍົກສູງຄຸນນະພາບທາງດ້ານການສຶກສາ ແລະ ການພັດທະນາສີມືແຮງງານ ທີ່ມີຄຸນນະພາບ ພ້ອມທັງ ຮັບປະກັນການມີວຽກເຮັດງານທໍາ ແລະ ຮອງຮັບການຂະຫຍາຍໂຕທາງດ້ານເສດຖະກິດ ຢ່າງຍືນຍົງ;<br>• ລວມມີ 12 ຈຸດ |
| 2. ກະຊວງການຕ່າງປະເທດ | • ນໍາໃຊ້ກາລະໂອກາດໃນການເປັນປະທານອາຊຽນ ໃນປີນີ້ ເພື່ອຊຸກຍູ້ສົ່ງເສີມບັນດາຍຸດທະສາດການພັດທະນາ ແລະ ຟື້ນຟູເສດຖະກິດ ຂອງ ສປປ ລາວ ທີ່ຕິດພັນກັບວາລະສາກົນ ໃຫ້ຖືກນໍາໃຊ້ຢ່າງມີປະສິດທິຜົນ ໂດຍສະເພາະໃນຂອບອາຊຽນ;<br>• ນໍາໃຊ້ຄວາມໄດ້ປຽບທາງດ້ານຍຸດທະສາດທີ່ຕັ້ງ, ຄວາມອຸດົມສົມບູນທາງດ້ານຊັບພະຍາກອນທໍາມະຊາດ ຊິວະນານາພັນ ເພື່ອສະໜັບສະໜູນການຫັນນະໂຍບາຍຈາກປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລໃຫ້ເປັນປະເທດທີ່ມີການເຊື່ອມຈອດ ເພື່ອຮັບປະກັນການອອກຈາກສະຖານະພາບປະເທດດ້ອຍພັດທະນາ ຢ່າງມີສະຖຽນລະພາບ ແລະ ຍືນຍົງ;<br>• ລວມມີ 5 ຈຸດ |

# ແຈ້ງການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2023: (2)

| Government Agencies | Key action areas |
|---|---|
| 3. ກະຊວງການເງິນ ແລະທະນາຄານແຫ່ງ ສປປ ລາວ | • ພັດທະນາດ້ານໂຄງສ້າງເສດຖະກິດ ໃຫ້ເຂັ້ມແຂງມີສະຖຽນ ລະພາບ ແລະ ຈັດລຽງບູລິມະສິດ ໃຫ້ແທດເໝາະກັບສະພາບການພັດທະນາ ໂດຍດໍາເນີນການປະຕິຮູບການຄຸ້ມຄອງການເງິນພາກລັດ ເພື່ອໃຫ້ສອດຄ່ອງກັບສະພາບເສດຖະກິດໃນປັດຈຸບັນ ໂດຍການລະດົມລາຍຮັບ, ສະຖຽນລະພາບດ້ານການເງິນ, ການປັບໂຄງສ້າງໜີ້ສິນ, ເພີ່ມທະວີການປະສານສົມທົບ ລະຫວ່າງ ພາກລັດ-ເອກະຊົນ, ຄວາມໂປ່ງໃສ, ການແຂ່ງຂັນ ແລະ ການຈັດສັນລາຍຈ່າຍໃຫ້ແກ່ພາກສັງຄົມ ຢ່າງມີປະສິດທິຜົນກວ່າ;<br>• ລວມມີ 2 ຈຸດ |
| 4. ກະຊວງສຶກສາທິການ ແລະກິລາ | • ຈັດລຽງບູລິມະສິດ ໃນການລົງທຶນທາງດ້ານຊັບພະຍາກອນມະນຸດ ເພື່ອປູພື້ນຖານ ໂດຍການຍົກສູງຄຸນນະພາບທາງດ້ານການສຶກສາ ແລະ ການພັດທະນາສີມືແຮງງານ ທີ່ມີຄຸນນະພາບ ພ້ອມຮັບປະກັນການມີວຽກເຮັດງານທໍາ ແລະ ຮອງຮັບການຂະຫຍາຍໂຕທາງດ້ານເສດຖະກິດ ຢ່າງຍືນຍົງ;<br>• ລວມມີ 4 ຈຸດ |
| 5. ກະຊວງສາທາລະນະສຸກ | • ເພີ່ມທະວີການນໍາໃຊ້ລະບົບຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ (ຂໍ້ມູນຂ່າວສານດ້ານສຸຂະພາບ, ເຕັກໂນໂລຊີສໍາລັບການກວດສຸຂະພາບ) ແລະ ເຊື່ອມໂຍງບັນດາຖານຂໍ້ມູນຕ່າງໆຂອງບັນດາຂະແໜງການເຂົ້າກັນ ເພື່ອເປັນບ່ອນອີງໃນດ້ານນະໂຍບາຍ;<br>• ສົ່ງເສີມການເຂົ້າເຖິງການບໍລິການດ້ານສາທາລະນະສຸກ, ການຄຸ້ມຄອງສຸຂະພາບຢ່າງທົ່ວເຖິງ ໂດຍສະເພາະຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນທາງການແພດ ແລະ ການຮັກສາສຸຂະພາບຂັ້ນຕົ້ນ ເພື່ອຮັບມືກັບການລະບາດຂອງຍາດຕ່າງໆ;<br>• ລວມມີ 4 ຈຸດ |

# ແຈ້ງການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2023: (3)

| Government Agencies | Key action areas |
|---|---|
| 6. ກະຊວງແຮງງານ ແລະສະຫວັດດີການສັງຄົມ | • ສືບຕໍ່ການພັດທະນາສີມືແຮງງານ ທີ່ມີຄຸນນະພາບ ພ້ອມທັງ ຮັບປະກັນການມີວຽກເຮັດງານທຳ ແລະ ຮອງຮັບການຂະຫຍາຍໂຕທາງດ້ານເສດຖະກິດ;<br>• ລວມມີ 2 ຈຸດ |
| 7. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະການທ່ອງທ່ຽວ | ▪ ສ້າງຄວາມເຂັ້ມແຂງ ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ການທ່ອງທ່ຽວ, ການປົກປ້ອງມໍລະດົກວັດທະນະທຳ ໂດຍການເພີ່ມທະວີການນຳໃຊ້ຄວາມໄດ້ປຽບທາງດ້ານຍຸດທະສາດທີ່ຕັ້ງ, ຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ຊີວະນາໆພັນ ເພື່ອສ້າງຄວາມດຸ່ນດ່ຽງທາງດ້ານເສດຖະກິດ, ປັບປຸງປະສິດທິພາບ ແລະ ບັນຍາກາດທີ່ເອື້ອອຳນວຍ ເພື່ອດຶງດູດ ແລະ ສ້າງມູນຄ່າຕາມທ່າແຮງ ຂອງ ສປປ ລາວ ໂດຍສະໜັບສະໜູນການເພີ່ມທະວີການທ່ອງທ່ຽວດ້ານລະບົບນິເວດທາງທຳມະຊາດ ແລະ ວັດທະນະທຳອັນດີງາມ ພ້ອມທັງ ດຶງດູດນັກທ່ອງທ່ຽວ ໃຫ້ເຂົ້າມາທ່ອງທ່ຽວດົນຂຶ້ນ ແລະ ໃຊ້ຈ່າຍຫຼາຍຂຶ້ນ. (ລວມມີ 1 ຈດ) |
| 8. ກະຊວງພາຍໃນ | • ເພີ່ມທະວີການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ບັນດາສະມາຄົມ, ມູນນິທິ ແລະ ພາກສ່ວນຕ່າງໆຂອງສັງຄົມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX; (ລວມມີ 3 ຈຸດ) |
| 9. ກະຊວງອຸດສາຫະກຳ ແລະການຄ້າ | • ສືບຕໍ່ລະດົມແຫຼ່ງທຶນເພີ່ມຕື່ມຈາກພາຍໃນ ແລະຕ່າງປະເທດ, ພ້ອມທັງ ສ້າງເງື່ອນໄຂໃຫ້ພາກເອກະຊົນມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນການປະກອບສ່ວນທຶນທີ່ຮັບປະກັນຄວາມຍືນຍົງໃຫ້ແກ່ການພັດທະນາທຶນມະນຸດ; (ລວມມີ 2 ຈຸດ) |

| Government Agencies | Key action areas |
|---|---|
| 10. **ກະຊວງກະສິກຳ ແລະປ່າໄມ້** | • ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ໂດຍແນ່ໃສ່ປະລິມານຜົນຜະລິດ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຊົມໃຊ້ຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ; (ລວມມີ 4 ຈຸດ) |
| 11. **ກະຊວງປ້ອງກັນຄວາມສະຫງົບ** | ▪ ທົບທວນຄືນການຈັດຕັ້ງປະຕິບັດ ບັນດາສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກໃນການແກ້ໄຂ ບັນຫາຢາເສບຕິດ ເພື່ອຊຸກຍູ້ສົ່ງເສີມຂະຫຍາຍການປະສານງານຮ່ວມມືກັນກັບແຕ່ລະພາກສ່ວນຫຼາຍຂຶ້ນ; ລວມມີ 2 ຈຸດ |
| 12. **ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ** | • ປັບປຸງປະສິດທິພາບ ແລະ ບັນຍາກາດການລົງທຶນທີ່ເອື້ອອຳນວຍ ເພື່ອດຶງດູດ ແລະ ສ້າງມູນຄ່າຕາມທ່າແຮງ ຂອງ ສປປ ລາວ ເຊັ່ນ: ການລົງທຶນດ້ານພະລັງງານທົດແທນ, ການທ່ອງທ່ຽວທີ່ຕິດພັນກັບທຳມະຊາດ ແລະ ຄວາມຍືນຍົງ ເຊິ່ງທຳມະຊາດເປັນຊັບສິນຂອງ ສປປ ລາວ ຄວນຕ້ອງປົກປັກຮັກສາ ແລະ ມີແບບແຜນການນຳໃຊ້ໃຫ້ດີ; ລວມມີ 4 ຈຸດ |
| | |

# II. ບູລິມະສິດ ແລະ ແຜນວຽກຈຸດສຸມເພື່ອກະກຽມກອງປະຊຸມໂຕະມົນ ແລະ ຮ່າງແນວຄວາມຄິດກອງປະຊຸມໂຕະມົນ 2024 (1)

| Key activities | Time Frame |
|---|---|
| 1. ກອງປະຊຸມກະກຽມທິດທາງສຳລັບກອງປະຊຸມໂຕະມົນປະຈຳປີ 2024 | ເມສາ 2024 (ສຳເລັດ) |
| 2. ກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນ ປະຈຳປີ 2023 ແລະວາງແຜນທິດທາງແຜນການຈັດກອງປະຊຸມໂຕະມົນ ປະຈຳປີ 2024 | 13 ພຶດສະພາ 2024 (ມື້ນີ້) |
| 3. ກອງປະຊຸມປະທານ ແລະປະທານຮ່ວມ ໜ່ວຍງານຂະແໜງການ | ມິຖຸນາ 2024 |
| 4. ກອງປະຊຸມຮ່ວມກັບບັນດາສະຖານເອກະອັກຄະລັດຖະທູດ ແລະອົງການສາກົນທີ່ບໍ່ມີຫ້ອງການຢູ່ ສປປ ລາວ | ກັນຍາ 2024 |
| 5. ກອງປະຊຸມພົບປະນັກຂ່າວ | ຕຸລາ 2024 |
| 6. ກອງປະຊຸມຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ (Meeting of National Steering Committee for the Round Table Process) | ຕຸລາ 2024 |
| 7. ກອງປະຊຸມປຶກສາຫາລື ທີ່ຕິດພັນກັບຫົວຂໍ້ຂອງກອງປະຊຸມໂຕະມົນປະຈຳປີ (Pre-consultation meetings) | ກັນຍາ - ຕຸລາ 2024 |
| 8. ກອງປະຊຸມໂຕະມົນ ປະຈຳປີ 2024 | ຕຸລາ 2024 |

# (2)

| Key activities | Timeframe |
|---|---|
| 9. ລາຍງານຜົນກອງປະຊຸມໂຕະມົນປະຈຳປີ 2024 ໃຫ້ ພະນະ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ | ພະຈິກ 2024 |
| 10. ນຳພາຄູ່ຮ່ວມພັດທະນາເຂົ້າຢ້ຽມຄຳນັບ ພະນະທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ທີ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | ພະຈິກ 2024 |
| 11. ເຜີຍແຜ່ແຈ້ງການຜັນຂະຫຍາຍຜົນກອງປະຊຸມໂຕະມົນປະຈຳປີ 2024 ຂອງສຳນັກງານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ | ທັນວາ 2024 |

# ຮ່າງແນວຄວາມຄິດກ່ຽວກັບກອງປະຊຸມໂຕະມົນປະຈຳປີ 2024

1. ຫົວຂໍ້ຂອງກອງປະຊຸມ

(1) ເລັ່ງລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ IX ເພື່ອບັນລຸເປົ້າໝາຍການພັດທະນາ ວາລະຮອດປີ 2030 ແລະການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ X.

(2) ເພີ່ມທະວີການເປັນຄູ່ຮ່ວມພັດທະນາຢ່າງມີປະສິດທິຜົນ ເພື່ອເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ IX ແລະກະກຽມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ X (2026-2030) ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະຫຼຸດພົ້ນອອກຈາກຖານະພາບປະເທດດ້ອຍພັດທະນາ.

## 2. ຮູບແບບກອງປະຊຸມ

- ວັນເວລາ: 10 ຕຸລາ 2024
- ສະຖານທີ່: ຫໍປະຊຸມແຫ່ງຊາດ ຫຼື ອາດຈັດຢູ່ບັນດາແຂວງທີ່ມີຄວາມສາມາດມາດ
- ຮູບແບບ: (ຮູບແບບ 1): ປະຊຸມໝົດມື້

(ຮູບແບບ 2): ຈັດກອງປະຊຸມປິ້ນອອ້ມໂດຍນໍາເອົາຫົວຂໍ້ທີ່ຕິດພັນກັບດອງປະຊຸມໂຕະ ມົນປະຈໍາປີ 2024 ມາຈັດກອນມື້ປະຊຸມໂຕະມົນ 5 ມື້ ເພື່ອນໍາເອົາຜົນ ມາສະຫຼູບລາຍງານໃນກອງປະຊຸມໂຕະມົນ ປະຈໍາປີ 2024

(ຮູບແບບ 3): Policy Level Round Table Implementation Meeting Proceeded by Technical discussions and Field Visit

- ຄະນະປະທານ: ທ່ານ ເພັດ ພົມພິທັກ, ລັດຖະມົນຕີກະຊວງແຜນການ ແລະການລົງທຶນ, ຮອງປະທານ ທັງເປັນຜູ້ປະຈໍາການຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ ແລະ ທ່ານ ບັກໂຄເດັຍ ເບີຄະນອໍຟ ຜູ້ປະສານງານອົງການ ສົປຊ ປະຈໍາ ສປປ ລາວ.

- ແຂກເຂົ້າຮ່ວມກອງປະຊຸມ:

  - ລັດຖະບານ:

    - ✓ບັນດາທ່ານ ລັດຖະມົນຕີ/ ຮອງລັດຖະມົນຕີກະຊວງຂະແໜງການ;
    - ✓ບັນດາທ່ານ ຮອງປະທານກຳມາທິການສະພາແຫ່ງຊາດ;
    - ✓ບັນດາທ່ານ ປະທານ / ຮອງປະທານອົງການທຽບເທົ່າ;
    - ✓ບັນດາທ່ານ ຮອງເຈົ້າແຂວງ;
    - ✓ບັນດາທ່ານຫົວໜ້າກົມ, ຫົວໜ້າຫ້ອງການ ຂອງບັນດາກະຊວງຂະແໜງການ;
    - ✓ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ-ນະຄອນຫຼວງ ວຽງຈັນ;
    - ✓ຫົວໜ້າຂະແໜງຮ່ວມມື ສາກົນ ແລະ ຂະແໜງແຜນການ ຂອງພະແນກແຜນການ ແລະການລົງທຶນ ແຂວງ ແລະ ນະຄອນຫລວງ.

- ຄູ່ຮ່ວມພັດທະນາ:
  - ✓ບັນດາທ່ານ ທູດ, ຕານຸທູດ, ຜູ້ຕາງໜ້າຂອງບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ປະຈໍາຢູ່ ສປປ ລາວ ແລະ ປະຈໍາພາກພື້ນ;
  - ✓ບັນດາທ່ານ ຜູ້ຕາງໜ້າ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ;
  - ✓ບັນດາທ່ານ ຜູ້ຕາງໜ້າ ສະມາຄົມທີ່ບໍ່ຫວັງຜົນກໍາໄລ;
  - ✓ບັນດາທ່ານ ຜູ້ຕາງໜ້າສະພາການຄ້າ ແລະອຸດສາຫະກໍາແຫ່ງຊາດ (ພາກເອກະຊົນ) ລາວ ແລະ ຕ່າງປະເທດ.

# Thank you